# ຝຶກອົບຮົມແບບໃກ້ຊິດ ຫົວຂໍ້: ວຽກງານປະຊາສຳພັນ ການຮັບຮູ້ສິດຕາມປະເພນີ ແລະ ການຂຶ້ນທະບຽນທີ່ດິນລວມໝູ່


ປຶ້ມຄູ່ມື

ປະຊາສຳພັນ ການຮັບຮູ້ສິດນຳໃຊ້ທີ່ດິນຕາມປະເພນີ
ແລະ ການຂຶ້ນທະບຽນທີ່ດິນລວມໝູ່ ໂດຍສະເພາະໃນເຂດສາມປະເພດປ່າ

**ສະໜັບສະໜູນໂດຍ:** ແຜນງານ ທີ່ດິນ ລາວ-ເຢຍລະມັນ ແລະ ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນ ເພື່ອເພີ່ມຄວາມໝັ້ນຄົງດ້ານສະບຽງອາຫານ

ຜູ້ຂຽນ: ເລໄປນ ບຸນເມັງ
ນາງ ວິສຸດາ ແກ້ວເມືອງທອງ

## ທ່ານຈະຮຽນຮູ້ຫຍັງແດ່?

- ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ແບບລວມໝູ່ ໃຫ້ມີຄວາມຍືນຍົງ ຕາມນິຕິກຳທາງກົດໝາຍ ແລະ ນະໂຍບາຍຂອງລັດ;
- ທັກສະໃນການເປັນຄູຝຶກທີ່ຫຼາກຫຼາຍກ່ຽວກັບວຽກງານປະຊາສຳພັນ;
- ຮຽນຮູ້ກົດໝາຍວ່າດ້ວຍທີ່ດິນ ມາດຕາ 44, 81, 94, 101, 126, 130, 133, 141, 144, 163, 164, 164, 165, 166, 171.
- ຮຽນຮູ້ກົດໝາຍວ່າດ້ວຍປ່າໄມ້ ມາດຕາ 22, 39, 69, 71.

## ວາລະຝຶກອົບຮົມມີຫຍັງແດ່?

ຝຶກອົບຮົມແບບໃກ້ຊິດ ໃຊ້ເວລາ 5 ວັນ:

- 3 ວັນ ຝຶກກ່ຽວກັບການເປັນຄູຝຶກ ແລະ ທິດສະດີດ້ານກົດໝາຍ;
- 1 ວັນ ສຳລັບຄູຝຶກ ແລະ ຜູ້ເຂົ້າຮ່ວມ ວາງແຜນ, ກະກຽມ ແລະ ຝຶກຊ້ອມຮ່ວມກັນ ກ່ອນລົງໄປທົດລອງຢູ່ຂັ້ນບ້ານ;
- 1 ວັນ ສຳລັບການລົງສາທິດສຳພາດກຸ່ມເປົ້າໝາຍຂອງໂຄງການທ່ານໃນຂັ້ນເມືອງ ຫຼື ຂັ້ນບ້ານ ແລະ ສະຫຼຸບປະເມີນຜົນຮ່ວມກັນ.

## ວິທີການດຳເນີນງານມີແນວໃດແດ່?

- ເຕັກນິກວິທີການຮຽນຮູ້ແບບມີສ່ວນຮ່ວມ ແລະ ມີປະຕິກິລິຍາໂຕ້ຕອບ;
- ຝຶກອົບຮົມ ແມ່ນດຳເນີນໂດຍຄູຝຶກຫຼັກທີ່ໄດ້ຮັບການອົບຮົມ ແລະ ມີປະສົບການເຮັດວຽກນຳຊຸມຊົນ;
- ເຄື່ອງມືປະກອບດ້ວຍແຜນບົດສອນ ແລະ ອຸປະກອນ.

## ເນື້ອໃນຂອງຫຼັກສູດມີຫຍັງແດ່?

- ສິດ ແລະ ພັນທະຂອງພົນລະເມືອງລາວຕໍ່ກັບທີ່ດິນ;
- ການໄດ້ສິດ ແລະ ການເສຍສິດນຳໃຊ້ທີ່ດິນ;
- ການນຳໃຊ້ທີ່ດິນຂອງລັດ ເພື່ອເປົ້າໝາຍລວມໝູ່;
- ຄວາມແຕກຕ່າງຂອງດິນລັດ, ດິນລວມໝູ່ ແລະ ດິນບຸກຄົນ;
- ບົດບາດຍິງ-ຊາຍ ແລະ ສິດຜົນປະໂຫຍດຮ່ວມກັນຕໍ່ວຽກງານຂຶ້ນທະບຽນທີ່ດິນລວມໝູ່;
- ການຂຶ້ນທະບຽນທີ່ດິນ ແລະ ຂັ້ນຕອນ ດຳເນີນການຂຶ້ນທະບຽນທີ່ດິນ.

## ສະເໜີຂໍຮັບການຝຶກອົບຮົມແບບໃກ້ຊິດໄດ້ແນວໃດ?

*ກ່ອນຝຶກອົບຮົມແບບໃກ້ຊິດ:*

- **4 ອາທິດລ່ວງໜ້າ:** ທ່ານຕ້ອງສົ່ງໜັງສືສະເໜີ ເພື່ອເຊີນໃຫ້ໂຄງການໄລຟ໌ ໄປຈັດຝຶກອົບຮົມແບບໃກ້ຊິດ ໃຫ້ແກ່ອົງກອນຂອງທ່ານ ແລະ ຄູ່ຮ່ວມງານທ້ອງຖິ່ນ;
- **3 ອາທິດລ່ວງໜ້າ**: ສົ່ງແຜນບົດຮຽນ ໃຫ້ແກ່ຄູ່ຮ່ວມງານພາກລັດ ແລະ ແບ່ງປັນຄຳຄິດເຫັນທີ່ມີ ຈາກອົງກອນຂອງທ່ານ ຫຼື ຈາກຄູ່ຮ່ວມງານທ້ອງຖິ່ນ ໃຫ້ແກ່ໂຄງການໄລຟ໌;
- **2 ອາທິດລ່ວງໜ້າ**: ສົ່ງລາຍຊື່ບ້ານເພື່ອເຮັດຝຶກອົບຮົມທົດລອງ, ສະຖານທີ່, ໄລຍະທາງ, ລວມທັງເຜົ່າ ແລະ ກຳນົດລະອຽດວ່າ ຈຳເປັນຕ້ອງມີລ່າມແປພາສາ ຫຼື ບໍ່;
- **1 ອາທິດລ່ວງໜ້າ**: ແຈ້ງໃຫ້ໂຄງການໄລຟ໌ຮູ້ ກ່ຽວກັບຈຳນວນຂອງບ້ານ ທີ່ອົງກອນຂອງທ່ານ ວາງແຜນຈະຈັດຝຶກອົບຮົມ ພາຍຫຼັງຝຶກອົບຮົມຈາກໂຄງການໄລຟ໌.

*ພາຍຫຼັງຝຶກອົບຮົມແບບໃກ້ຊິດ:*

- ແຈ້ງໃຫ້ໂຄງການໄລຟ໌ຮັບຮູ້ ກ່ຽວກັບການຝຶກອົບຮົມຂັ້ນຊຸມຊົນຂອງໜ່ວຍງານທ່ານ: ຊື່ບ້ານ, ເມືອງ, ຈຳນວນຂອງຜູ້ເຂົ້າຮ່ວມທັງໝົດ, ຈຳນວນຜູ້ເຂົ້າຮ່ວມທີ່ເປັນເພດຍິງ-ຊາຍ ແລະ ຊົນເຜົ່າ.

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG
Village Focus International
ສະຫະພາບເອີຣົບ European Union

ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ຕູ້ໄປສະນີ 4697
ໂທ: +856 021 312 519, ແຟກ +856 021 315 841
Email: lifeproject@villagefocus.org